# ຮ່ອງຮອຍເຫີໂປໂສ ແມ່ນຫຍັງ?



## ເປັນຫຍັງຮ່ອງຮອຍເຫີໂປໂສ ຈຶ່ງມີຄວາມໝາຍສຳຄັນ?

ເປັນຫຍັງຮ່ອງຮອຍເຫີໂປໂສ (Hebosuo) ຈຶ່ງມີຄວາມໝາຍສຳຄັນ? ຍ້ອນວ່າການຄົ້ນພົບຮ່ອງຮອຍແຫ່ງນີ້ ໄດ້ເປັນຫຼັກຖານໂດຍກົງໃຫ້ແກ່ການຄົ້ນຄວ້າປະຫວັດສາດກ່ຽວກັບລາຊະວົງຮັ້ນ ໄດ້ປົກຄອງເຂດຊາຍແດນພາກຕາເວັນຕົກສ່ຽງໃຕ້ໂດຍກົງ ເຊິ່ງຖືກເອີ້ນວ່າເປັນ "ລູກກຸນແຈໃນການຄົ້ນຄວ້າລາຊະວົງຮັ້ນ".

ຮ່ອງຮອຍເຫີໂປໂສ ມີເນື້ອທີ່ທັງໝົດປະມານ 12 ກິໂລຕາແມັດ, ເນື້ອທີ່ເຂດໃຈກາງມີປະມານ 3 ກິໂລຕາແມັດ, ເປັນຮ່ອງຮອຍໃຈກາງຂະໜາດໃຫຍ່ແຕ່ລາຊະວົງຊາງ ແລະ ໂຈ່ວຈົນເຖິງລາຊະວົງຮັ້ນ ແລະ ຈິ້ນ (ລະຫວ່າງ ປີ 1600 ຫາ 420 ກ່ອນ ຄ.ສ.) ທີ່ມີຂະໜາດໃຫຍ່ທີ່ສຸດ, ມີປະຫວັດສາດສືບທອດຍາວທີ່ສຸດ ແລະ ມີເນື້ອໃນວັດທະນະທຳທີ່ອາວອຸດົມສົມບູນ.

ຮ່ອງຮອຍເຫີໂປໂສ ຕັ້ງຢູ່ເຂດພາກກາງຢຸນນານ ແລະ ເປັນເຂດໃຈກາງຂອງວັດທະນະທຳສີຈ້າຍຊານ ກໍຄືວັດທະນະທຳຢຸນນານ. ໃນຊຸມປີ 1950 ຫາ 1960, ການຂຸດຄົ້ນບູຮານນະຄະດີ 4 ຄັ້ງຕໍ່ຫຼາຍຂຸມຝັງສົບສີຈ້າຍຊານຖືກພິສູດວ່າ ເປັນຂຸມຝັງສົບຊັ້ນສູງຂອງອານາຈັກຢຸນນານບູຮານ ແລະ ກໍເປັນຫຼັກຖານຢັ້ງຢືນໃຫ້ເຫັນວ່າ ເຄີຍມີອານາຈັກຢຸນນານບູຮານໃນປະຫວັດສາດ.

ນັບແຕ່ປີ 2014 ເປັນຕົ້ນມາ, "ແຜນປະຕິບັດງານຂຸດຄົ້ນບູຮານນະຄະດີບັນດາຂຸມຝັງສົບສີຈ້າຍຊານ" ໄດ້ຮັບການຈັດຕັ້ງປະຕິບັດ, ວຽກງານຂຸດຄົ້ນບູຮານນະຄະດີຕໍ່ບັນດາຂຸມຝັງສົບສີຈ້າຍຊານ ແລະ ຮ່ອງຮອຍເຫີໂປໂສ ໄດ້ດຳເນີນມາຢ່າງຕໍ່ເນື່ອງ. ຈົນມາເຖິງເດືອນທັນວາ ປີ 2024, ໄດ້ຂຸດຄົ້ນເນື້ອທີ່ທັງໝົດໜຶ່ງໝື່ນຕາແມັດ ແລະ ໄດ້ຄົ້ນພົບວັດຖຸບູຮານປະເພດຕ່າງໆ ເກົ້າພັນກວ່າອັນ.



## ສອງພັນກວ່າປີກ່ອນ, ຈະວາງແຜນຜັງເມືອງແນວໃດ?

ພວກເຮົາລອງຄິດເບິ່ງວ່າ, ປະຊາຊົນອານາຈັກຢຸນນານບູຮານ ໃນສອງພັນກວ່າປີກ່ອນ ຈະວາງແຜນຜັງເມືອງຂອງຕົນແນວໃດ?

ໂດຍຜ່ານຈາກການສຳຫຼວດ ແລະ ຂຸດຄົ້ນທາງບູຮານນະຄະດີ, ນັກບູຮານວິທະຍາໄດ້ສະພາບລວມຂອງຮ່ອງຮອຍເຫີໂປໂສໂດຍພື້ນຖານ. ຮ່ອງຮອຍແຫ່ງນີ້ ຕັ້ງຢູ່ທາງທິດຕາເວັນອອກຂອງໜອງຕຽນສີ, ຢູ່ທາງທິດຕາເວັນອອກຂອງຮ່ອງຮອຍມີພູ 4 ໜ່ວຍອ້ອມຢູ່ທາງນອກຮ່ອງຮອຍ, ມີທີ່ຕັ້ງພູມສາດທີ່ດີທີ່ສຸດ. ຫ້ວຍນ້ຳລຳເຊຫຼາຍສາຍໄດ້ໄຫຼຜ່ານຮ່ອງຮອຍ ແລະ ກາຍເປັນຮ່ອງຮອຍວັດທະນະທຳທີ່ມີເອກະລັກພິເສດຂອງຕົນ.

ພາກຕາເວັນຕົກຂອງຮ່ອງຮອຍເຫີໂປໂສ ມີເຂດຕັ້ງພູມລຳເນົາ, ເຂດໄຫວ້ບູຊາ ແລະ ເຂດຜະລິດເຄື່ອງຫັດຖະກຳ. ພາກຕາເວັນອອກມີຮ່ອງຮອຍການປົກຄອງຂອງແຄວ້ນຢີ້ໂຈ່ວຂອງລາຊະວົງຮັ້ນເຊັ່ນ: ກຳແພງເມືອງ, ຮ່ອງນອກເມືອງ, ເສັ້ນທາງຫຼັກ ແລະ ສຳນັກງານຫ້ອງການບູຮານລະດັບສູງ. ນັກບູຮານວິທະຍາຍັງໄດ້ຄົ້ນພົບເສັ້ນທາງຫຼັກທີ່ຈະແຈ້ງ, ເຂດສຳນັກງານຫ້ອງການບູຮານລະດັບສູງ ແລະ ລະບົບລະບາຍນ້ຳທີ່ສົບສົນ. ທັງໝົດເຫຼົ່ານີ້ ໄດ້ສະແດງໃຫ້ເຫັນເຖິງ "ແຜນຜັງເມືອງ" ຂອງອານາຈັກຢຸນນານບູຮານ ແລະ ເຕັກນິກກໍ່ສ້າງໃນສະໄໝນັ້ນ ພ້ອມທັງໄດ້ສະແດງໃຫ້ເຫັນເຖິງໂຄງປະກອບ ແລະ ຮູບການປົກຄອງທາງສັງຄົມໃນສະໄໝບູຮານ.





## "ເອກະສານທາງການ" ຂອງສະໄໝບູຮານເປັນຄືແນວໃດ?

ຮ່ອງຮອຍເຫີໂປໂສ ໄດ້ຄົ້ນພົບວັດຖຸບູຮານທີ່ສຳຄັນເປັນຈຳນວນຫຼວງຫຼາຍ ເຊິ່ງໄດ້ເປັນຫຼັກຖານໃຫ້ແກ່ຮ່ອງຮອຍແຫ່ງນີ້ ເຄີຍເປັນເມືອງເອກຂອງແຄວ້ນຢີ້ໂຈ່ວຂອງລາຊະວົງຮັ້ນ.

ການຂຸດຄົ້ນໄດ້ພົບເຫັນດິນປິດຊອງຈົດໝາຍ 1.900 ກວ່າອັນ ໂດຍມີຮູບກາປະທັບ "ອັກຄະເສນາບໍດີ", ພ້ອມທັງດິນປິດຊອງໝາຍຂອງ 24 ເມືອງທີ່ຂຶ້ນກັບແຄວ້ນຢີ້ໂຈ່ວ. ມີກີບໄມ້ໄຜ່ ຫຼື ກີບໄມ້ທີ່ແກະສະຫຼະຕົວໜັງສື 5 ໝື່ນກວ່າກີບ, ໃນນັ້ນ, ມີຕົວໜັງສືຢູ່ນຳ 5 ພັນກວ່າກີບ ເຊິ່ງມີເນື້ອໃນກ່ຽວພັນເຖິງແຈ້ງການ, ໜັງສືທາງການ, ໜັງສືຕຸລາການ, ຈົດໝາຍ ແລະ ອື່ນໆ.

ດິນປິດຊອງຈົດໝາຍ ແລະ ກີບໄມ້ໄຜ່ເຫຼົ່ານີ້ເປັນ "ເອກະສານທາງການ" ຂອງອານາຈັກຢຸນນານບູຮານ ເຊິ່ງໄດ້ບັນທຶກການບໍລິຫານ, ລະບຽບກົດໝາຍ ແລະ ຊີວິດປະຈຳວັນໃນສະໄໝບູຮານ ພ້ອມທັງໄດ້ສະແດງໃຫ້ເຫັນເຖິງການໄປມາຫາສູ່ລະຫວ່າງອານາຈັກຢຸນນານບູຮານ ແລະ ລາຊະວົງຮັ້ນ.







## ຄົນສະໄໝນັ້ນພັກຢູ່ໃສ ແລະ ກິນຫຍັງ?

ປະຊາຊົນອານາຈັກຢຸນນານບູຮານສ່ວນຫຼາຍ ຕັ້ງພູມລຳເນົາຢູ່ແຄມນ້ຳ ແລະ ໄດ້ປຸກເຮືອນແບບມີຫຼາກຫຼາຍສີສັນ. ໃນຮ່ອງຮອຍໄດ້ພົບເຫັນຮອງຮອຍເຮືອນຮ້ານ, ເຮືອນແບບນີ້ມີສອງຊັ້ນ, ຄົນຢູ່ຊັ້ນເທິງ ແລະ ຊັ້ນລຸ່ມລ້ຽງສັດ; ຍັງພົບເຫັນຮ່ອງຮອຍຂອງເຮືອນຖ້ຳ, ມີໂຄງສ້າງຄົບຖ້ວນ, ເຈາະຢູ່ຕາມຖ້ຳຫີນ ແລະ ມີເສົາພ້ອມ ເຊິ່ງໄດ້ສະແດງໃຫ້ເຫັນວ່າ ຊາວຢຸນນານບູຮານມີຄວາມສາມາດປັບຕົວ ເພື່ອຮັບມືຕໍ່ສິ່ງແວດລ້ອມທຳມະຊາດ.

ກະສິກຳໃນສະໄໝນັ້ນສ່ວນຫຼາຍເອົາຈົກມາຂຸດດິນ, ຈົກທອງທີ່ໄດ້ຂຸດອອກມາສະແດງໃຫ້ເຫັນວ່າ ຄົນໃນສະໄໝນັ້ນ ໄດ້ໃຊ້ເຄື່ອງມືທອງໂດຍທົ່ວໄປ ເພື່ອທຳການຜະລິດທາງກະສິກຳ. ນອກນີ້, ຄົນທັງຫຼາຍຍັງໄດ້ລ້ຽງຄວາຍ, ມ້າ, ແບ້, ໝູ ແລະ ໄກ່ ພ້ອມທັງປະມົງຫາປາ ແລະ ຫອຍ ເພື່ອເປັນອາຫານ.

ຮ່ອງຮອຍເຫີໂປໂສ ໄດ້ພົບເຫັນສ້າງນ້ຳເປັນຈຳນວນຫຼວງຫຼາຍ, ໃນນັ້ນ, ສ້າງສ່ວນໜຶ່ງມີວົງອ້ອມສ້າງທີ່ເປັນເຄື່ອງເຄືອບ ແລະ ຮົ້ວໄມ້ ທີ່ສົມບູນ ເຊິ່ງໄດ້ສະແດງໃຫ້ເຫັນວ່າ ຊາວຢຸນນານບູຮານໄດ້ໃຊ້ຊັບພະຍາກອນນ້ຳຢ່າງສົມເຫດສົມຜົນ.

ການຄົ້ນພົບຮ່ອງຮອຍປະຫວັດສາດໃໝ່ 10 ອັນດັບທຳອິດປະຈຳປີ 2024 (ລຽງຕາມການເວລາປະຫວັດສາດ) ບັນດາຮ່ອງຮອຍແມ່ນ້ຳເມິງຊີ ນະຄອນຈີ່ຢາງແຂວງເສສວນ,ຮ່ອງຮອຍເຊ່ຍທາງ ເມືອງຊຽນຈູແຂວງເຈ້ຈຽງ, ຮ່ອງຮອຍຊືກຸຍເມືອງລິນຖາວແຂວງການຊູ, ຮ່ອງຮອຍມາປູຊິວເມືອງຄາງມາເຂດຊີ້ຈາງ, ຮ່ອງຮອຍພານລົງເສິງເມືອງຮວງພີແຂວງຫູເປີຍ, ຮ່ອງຮອຍໂຈ່ວຢວນນະຄອນປາວຈີແຂວງສ້ານຊີ, ຮ່ອງຮອຍລິວລີເຫີເມືອງຝາງຊານນະຄອນຫຼວງປັກກິ່ງ, ຂຸມຝັງສົບເລກໜຶ່ງຂອງອູວາງຕຸນນະຄອນຮຸຍໜານ, ຮ່ອງຮອຍເຫີໂປໂສ ເມືອງຈິ້ນໜິງແຂວງຢຸນນານ ແລະ ຮ່ອງຮອຍວັດໂມໂອນະຄອນຄາຊືເຂດຊິນຈຽງ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)



ynzhanba@163.com
laos.yunnangateway.com